ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະຈັດຕັ້ງສູນກາງພັກ

ເລກທີ 211/ກຈສພ
ນະຄອນຫຼວງວຽງຈັນ, ລົງວັນທີ 16 ສິງຫາ 2023

# ຄຳແນະນຳ

## ການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ

ເຖິງ: - ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຂວງ-ນະຄອນຫຼວງວຽງຈັນ;
- ຄະນະບໍລິຫານງານພັກ, ຄະນະປະຈຳພັກ ກະຊວງ-ອົງການ.

-ອີງຕາມ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ.

-ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ເລກທີ 18/ກມສພ, ລົງວັນທີ 02 ກັນຍາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຈັດຕັ້ງສູນກາງພັກ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດເນື້ອໃນຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ໃຫ້ຖືກຕ້ອງ, ເປັນເອກະພາບ ແລະ ທັນເວລາໃນທົ່ວພັກ, ຄະນະຈັດຕັ້ງສູນກາງພັກ ຈຶ່ງໄດ້ອອກຄຳແນະນຳຈັດຕັ້ງປະຕິບັດ ດັ່ງນີ້:

**I. ການກະກຽມດ້ານຂະບວນການ, ເນື້ອໃນ ແລະ ການດຳເນີນຊີວິດການເມືອງ.**

**1.** ການກະກຽມດ້ານຂະບວນການ: ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ;

**2. ວຽກງານເນື້ອໃນ.**

- ຮ່າງລາຍງານການເມືອງຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ: ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງຫ້ອງວ່າການສູນກາງພັກ;
- ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການ ຂອງກະຊວງ-ອົງການ: ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງກະຊວງແຜນການ ແລະ ການລົງທຶນ;
- ຮ່າງບົດສຳຫຼວດການນຳພາລວມ ແລະ ບຸກຄົນໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ: ໃຫ້ປະຕິບັດຕາມຄຳແນະນຳຂອງຄະນະກວດກາສູນກາງພັກ.

**II.ການເລືອກເຟັ້ນບຸກຄະລາກອນ.**

**1. ເປົ້າໝາຍເລືອກເຟັ້ນບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນໂຄງປະກອບຄະນະບໍລິຫານງານພັກ ແຕ່ລະຂັ້ນ.**

ໃຫ້ຄົ້ນຄວ້າເລືອກເຟັ້ນຈາກຄະນະບໍລິຫານງານພັກ ຊຸດເກົ່າ, ເປົ້າໝາຍທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ເປົ້າໝາຍອື່ນ ທີ່ມີຜົນງານພົ້ນເດັ່ນ ເຊິ່ງແຕ່ລະເປົ້າໝາຍ ແມ່ນມີຕຳແໜ່ງພັກ, ຕຳແໜ່ງ

ບໍລິຫານລັດ ຖັດລົງມາ 1-2 ຂັ້ນ ລະອຽດມີດັ່ງນີ້:

**1.1. ກະຊວງ-ອົງການ ປະກອບດ້ວຍ:**

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ເລຂາ, ຮອງເລຂາຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາໜ່ວຍພັກຮາກຖານ;
- ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ.

**1.2. ແຂວງ-ນະຄອນຫຼວງວຽງຈັນ:**

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ຄະນະປະຈໍາ, ປະທານຄະນະກໍາມາທິການ ແລະ ເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ;
- ເລຂາ, ຮອງເລຂາຄະນະພັກ, ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ນະຄອນຫຼວງວຽງຈັນ;
- ເລຂາ, ຮອງເລຂາພັກເມືອງ-ນະຄອນ ແລະ ເຈົ້າເມືອງ, ຮອງເຈົ້າເມືອງ-ນະຄອນ;
- ເລຂາ, ຮອງເລຂາຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາໜ່ວຍພັກຮາກຖານ;
- ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າພະແນກການອ້ອມຂ້າງແຂວງ-ນະຄອນຫຼວງວຽງຈັນ ແລະ ທຽບເທົ່າ ຂຶ້ນໄປ.

**1.3. ເມືອງ-ນະຄອນ ແລະ ທຽບເທົ່າ:**

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ເລຂາ, ຮອງເລຂາຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາໜ່ວຍພັກຮາກຖານ;
- ເລຂາ, ຮອງເລຂາຄະນະພັກ, ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ;
- ເລຂາ, ຮອງເລຂາຄະນະພັກຮາກຖານບ້ານ ແລະ ເລຂາ, ຮອງເລຂາໜ່ວຍພັກບ້ານ;
- ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈໍາເມືອງ-ນະຄອນ ຂຶ້ນໄປ.

**1.4. ຮາກຖານພັກ:**

1). ຮາກຖານພັກອ້ອມຂ້າງກະຊວງ-ອົງການ:

- **ຄະນະພັກຮາກຖານ:** ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າພະແນກ ຂຶ້ນໄປ;
- **ໜ່ວຍພັກຮາກຖານ:** ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າພະແນກ ຂຶ້ນໄປ.

2). ຮາກຖານພັກອ້ອມຂ້າງແຂວງ-ນະຄອນຫຼວງ:

- **ຄະນະພັກຮາກຖານ:** ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າຂະແໜງ ຂຶ້ນໄປ;
- **ໜ່ວຍພັກຮາກຖານ:** ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າຂະແໜງ ຂຶ້ນໄປ.

3). ຮາກຖານພັກອ້ອມຂ້າງເມືອງ-ນະຄອນ:

- **ຄະນະພັກຮາກຖານ:** ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າໜ່ວຍງານ ຂຶ້ນໄປ;
- **ໜ່ວຍພັກຮາກຖານ:** ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ ແລະ ສະມາຊິກພັກ

ສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າໜ່ວຍງານ ຂຶ້ນໄປ.

4). ຮາກຖານພັກບ້ານ:

- ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ, ນາຍບ້ານ, ຮອງນາຍບ້ານ, ຫົວໜ້າໜ່ວຍງານຂອງບ້ານ ທີ່ເປັນສະມາຊິກພັກສົມບູນ;

- ໜ່ວຍພັກຮາກຖານບ້ານ: ຄະນະໜ່ວຍພັກຮາກຖານບ້ານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ, ນາຍບ້ານ, ຮອງນາຍບ້ານ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານຂອງບ້ານ ທີ່ເປັນສະມາຊິກພັກສົມບູນ.

## 2. ໂຄງປະກອບຄະນະບໍລິຫານງານພັກ ແຕ່ລະຂັ້ນ

ຄະນະບໍລິຫານງານພັກ ຊຸດໃໝ່ ໃຫ້ເອົາໃຈໃສ່ໂຄງປະກອບເພດ, ເຜົ່າ ມີຈຳນວນເພີ່ມຂຶ້ນ ຕາມຈຸດພິເສດສະເພາະ ຂອງຄະນະພັກ ແຕ່ລະຂັ້ນ; ຮັບປະກັນ 3 ຮຸ່ນຄື: ຮຸ່ນອາວຸໂສ, ຮຸ່ນກາງ, ຮຸ່ນໜຸ່ມ; ໃນນີ້ ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃຫ້ກວມອັດຕາສ່ວນຫຼາຍ; ເຊິ່ງຮຸ່ນອາວຸໂສ ແມ່ນຜູ້ທີ່ມີອາຍຸກະສຽນລະຫວ່າງ 56-60 ປີ; ຮຸ່ນກາງລະຫວ່າງ 46 - 55 ປີ ແລະ ຮຸ່ນໜຸ່ມ ແມ່ນອາຍຸກະສຽນ 45 ປີ ລົງມາ.

## 3. ການກຳນົດຈຳນວນຄະນະປະຈຳພັກ ແຕ່ລະຂັ້ນ

ອົງຄະນະພັກໃດ ມີຈຳນວນກຳມະການຄະນະພັກ 09 ສະຫາຍ ຂຶ້ນໄປ ຈຶ່ງໃຫ້ມີຄະນະປະຈຳພັກ, ແຕ່ຈຳນວນຄະນະປະຈຳພັກ ຫຼາຍສຸດ ບໍ່ໃຫ້ເກີນ 1/3 ຂອງຈຳນວນຄະນະບໍລິຫານງານພັກ ຂັ້ນນັ້ນ.

ຕົວຢ່າງ: ຄະນະບໍລິຫານງານພັກແຂວງ (ກ) ມີຄະນະບໍລິຫານງານພັກ ຈຳນວນ 41 ສະຫາຍ, ຄະນະປະຈຳພັກ ແມ່ນບໍ່ໃຫ້ເກີນ 13 ສະຫາຍ.

## 4. ການກຳນົດຈຳນວນຜູ້ອອກຫາບທາມ ແລະ ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ

### 4.1. ການກຳນົດຈຳນວນຜູ້ອອກຫາບທາມບຸກຄະລາກອນ ຮອບສຸດທ້າຍ.

ຈຳນວນຜູ້ອອກຫາບທາມບຸກຄະລາກອນ ຮອບສຸດທ້າຍ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງຫຼາຍກວ່າຈຳນວນຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່;

ຕົວຢ່າງ: ອົງຄະນະພັກ (ກ) ຕ້ອງການຄະນະພັກ ຊຸດໃໝ່ ຈຳນວນ 23 ສະຫາຍ, ຈຳນວນຜູ້ອອກສະໝັກຮັບເລືອກຕັ້ງໃນກອງປະຊຸມໃຫຍ່ ຕ້ອງມີຢ່າງໜ້ອຍ 27 ສະຫາຍ ແລະ ຜູ້ອອກຫາບທາມບຸກຄະລາກອນຮອບສຸດທ້າຍ ຕ້ອງມີຢ່າງໜ້ອຍ 32 ສະຫາຍ; ເພື່ອຂີດອອກ 05 ສະຫາຍ, ຮັກສາໄວ້ 27 ສະຫາຍ.

### 4.2. ການກຳນົດຈຳນວນຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ.

- ອົງຄະນະພັກ ທີ່ຕ້ອງການຄະນະບໍລິຫານງານພັກ ແຕ່ 27 ສະຫາຍ ຂຶ້ນໄປ, ຈຳນວນຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈຳນວນຄະນະບໍລິຫານງານພັກ ທີ່ຕ້ອງການ ຢ່າງໜ້ອຍ 05 ສະຫາຍ;

- ອົງຄະນະພັກ ທີ່ຕ້ອງການຈຳນວນຄະນະບໍລິຫານງານພັກ ແຕ່ 17 - 25 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈຳນວນ ຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 04 ສະຫາຍ;

- ອົງຄະນະພັກ ຫຼື ຮາກຖານພັກ ທີ່ຕ້ອງການຄະນະພັກ ຈຳນວນ 09 - 15 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈຳນວນຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 03 ສະຫາຍ;

- ອົງຄະນະພັກ ຫຼື ຮາກຖານພັກ ທີ່ຕ້ອງການຄະນະພັກ ຈຳນວນ 03-07 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈຳນວນຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 02 ສະຫາຍ.

ຕົວຢ່າງ: ອົງຄະນະພັກ (ຂ) ຕ້ອງການຄະນະພັກ ຊຸດໃໝ່ ຈຳນວນ 15 ສະຫາຍ, ຈຳນວນຜູ້ອອກສະໝັກຮັບເລືອກຕັ້ງໃນກອງປະຊຸມໃຫຍ່ ຕ້ອງມີຢ່າງໜ້ອຍ 18 ສະຫາຍ, ເພື່ອຂີດອອກ 03 ສະຫາຍ, ຮັກສາໄວ້ 15 ສະຫາຍ.

**5. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ກະຊວງ-ອົງການ.**

**5.1. ກະຊວງ-ອົງການ ທີ່ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ໃຫ້ດຳເນີນການທາບທາມ 2 ຮອບ ດັ່ງນີ້:**

**5.1.1. ຮອບທີ 1:**

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ :
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ສະມາຊິກພັກສົມບູນທັງໝົດ;
- ເປົ້າໝາຍອອກທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ແຕ່ 01-03 ສະຫາຍ;

❖ **ວາລະ 02:** ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກ;
  + ສະມາຊິກພັກສົມບູນ ທີ່ມີຕຳແໜ່ງຮອງຫົວໜ້າກົມ ຂຶ້ນໄປ;
- ເປົ້າໝາຍອອກທາບທາມ ປະກອບດ້ວຍ:
  + ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ, ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕຳແໜ່ງ ແຕ່ 1-3 ສະຫາຍ.

**5.1.2. ຮອບທີ 2:**

ການຈັດຕັ້ງການທາບທາມ ຮອບທີ 2 (ຮອບສຸດທ້າຍ) ໃຫ້ດຳເນີນພາຍຫຼັງສຳເລັດການດຳເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກກະຊວງ-ອົງການ.

❖ ວາລະທີ 01: ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ສະມາຊິກພັກສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ສະມາຊິກພັກ;
- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນ ຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນກຳນົດຈຳນວນທີ່ຈະຂີດອອກ;

❖ ວາລະທີ 02: ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຮອບທີ 2 (ຄັ້ງສຸດທ້າຍ).

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
  + ຄະນະພັກຮາກຖານ ແລະ ເລຂາໜ່ວຍພັກຮາກຖານ;
  + ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານ ນັບແຕ່ຮອງຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ;
- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ(ບ່ອນບໍ່ມີຄະນະປະຈໍາ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນ ຈາກຜົນການທາບທາມ ຮອບທີ 1, ວາລະທີ 2 ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 2;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ ໃນແຕ່ລະຕໍາແໜ່ງ.

5.2. ກະຊວງ-ອົງການ ທີ່ດໍາເນີນກອງປະຊຸມໃຫຍ່ຜູ້ແທນສະມາຊິກພັກ ໃຫ້ດໍາເນີນການທາບທາມ 3 ຮອບ ດັ່ງນີ້:

**5.2.1. ຮອບທີ 1:**

- ເປົ້າໝາຍເຂົ້າຮ່ວມທາບທາມຄະນະບໍລິຫານງານພັກ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
  + ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານພັກ;
  + ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;
  + ພະນັກງານບໍານານ ອາດີດຄະນະບໍລິຫານງານພັກ ທີ່ຍັງຮ່ວມຊີວິດພັກ ຢູ່ກະຊວງ-ອົງການດັ່ງກ່າວ;
- ເປົ້າໝາຍອອກທາບທາມຄະນະບໍລິຫານງານພັກ ປະກອບດ້ວຍ :
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
  + ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 1-3 ສະຫາຍ.

**5.2.2. ຮອບທີ 2:**

❖ ວາລະທີ 01: ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
  + ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
  + ຜູ້ແທນສົມບູນ ແລະ ສໍາຮອງ ທີ່ໄດ້ຮັບການເລືອກຕັ້ງຈາກບັນດາຮາກຖານພັກ;
- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນບໍ່ກໍານົດຈໍານວນທີ່ຈະຂີດອອກ, ໃນກໍລະນີ ຂີດອອກໝົດ ຫຼື ບໍ່ຂີດ ຖືວ່າບັດໃຊ້ການບໍ່ໄດ້.

❖ ວາລະທີ 02: ແມ່ນການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;

+ ຜູ້ແທນສົມບູນ ແລະ ສຳຮອງ ທີ່ໄດ້ຮັບການເລືອກຕັ້ງຈາກຮາກຖານພັກ.

- **ເປົ້າໝາຍອອກຫາບທາມ ປະກອບດ້ວຍ:**

+ ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ, ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ໃຫ້ຜູ້ເຂົ້າຮ່ວມຫາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕຳແໜ່ງ ແຕ່ 1-3 ສະຫາຍ.

**5.2.3. ຮອບທີ 3:**

ການຈັດຕັ້ງການຫາບທາມ ຮອບທີ 3 (ຮອບສຸດທ້າຍ) ແມ່ນໃຫ້ດຳເນີນພາຍຫຼັງສຳເລັດການດຳເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກກະຊວງ-ອົງການ;

❖ **ວາລະທີ 01:** ແມ່ນການຫາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສຳຫຼວດການນຳພາລວມ ຄັ້ງສຸດທ້າຍ;

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

- **ເປົ້າໝາຍອອກຫາບທາມ ໃຫ້ປະຕິບັດດັ່ງນີ້ :**

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການຫາບທາມ ຮອບທີ 02 ໃນວາລະທີ 01, ເພື່ອເອົາອອກຫາບທາມ ຮອບທີ 03 ໃນວາລະທີ 01;

- **ການຂີດບັດຫາບທາມ:** ແມ່ນກຳນົດຈຳນວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການຫາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຜູ້ແທນສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ ທີ່ບໍ່ແມ່ນຄະນະບໍລິຫານງານພັກ;

- **ເປົ້າໝາຍອອກຫາບທາມ ໃຫ້ປະຕິບັດດັ່ງນີ້:**

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການຫາບທາມ ຮອບທີ 02 ໃນວາລະທີ 02, ເພື່ອເອົາອອກຫາບທາມ ຮອບທີ 3 ໃນວາລະທີ 2 (ຄັ້ງສຸດທ້າຍ);

- **ການຂີດບັດຫາບທາມ:** ແມ່ນກຳນົດຈຳນວນທີ່ຈະຂີດອອກ ໃນແຕ່ລະຕຳແໜ່ງ.

**5.3.** ສຳລັບອົງຄະນະພັກກະຊວງປ້ອງກັນປະເທດ ເນື່ອງຈາກມີຈຸດພິເສດສະເພາະ, ສະນັ້ນ ການຫາບທາມບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ແມ່ນຄະນະຈັດຕັ້ງສູນກາງພັກ ຈະສົມທົບກັບຄະນະປະຈຳພັກ ກະຊວງ ເພື່ອຮ່ວມກັນຄົ້ນຄວ້າ ແລ້ວລາຍງານຂໍຄຳເຫັນຈາກສະຫາຍຜູ້ປະຈຳການຄະນະເລຂາທິການສູນກາງພັກ ກ່ອນການປະຕິບັດ.

**6. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກແຂວງ-ນະຄອນຫຼວງວຽງຈັນ.**

**6.1. ຮອບທີ 1:**

❖ ເປົ້າໝາຍເຂົ້າຮ່ວມທາບທາມ ຄະນະບໍລິຫານງານພັກ ປະກອບດ້ວຍ:

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
- ຄະນະປະຈຳ; ປະທານ, ຮອງປະທານຄະນະກຳມາທິການ; ເລຂາ ແລະ ຮອງເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ;
- ຄະນະບໍລິຫານງານພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ;
- ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າຂະແໜງ ແລະ ທຽບເທົ່າ ຂຶ້ນໄປ;
- ຄະນະບໍລິຫານງານພັກເມືອງ-ນະຄອນ;
- ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການ ແລະ ທຽບເທົ່າຂອງເມືອງ-ນະຄອນ ຂຶ້ນໄປ;
- ຄະນະພັກກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ ແລະ ທຽບເທົ່າ ຂຶ້ນໄປ;
- ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
- ພະນັກງານບຳນານ ອາດີດຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ ທີ່ຍັງຮ່ວມຊີວິດພັກ ຢູ່ອົງຄະນະພັກດັ່ງກ່າວ.

❖ ເປົ້າໝາຍອອກທາບທາມ ຄະນະບໍລິຫານງານພັກ ປະກອບດ້ວຍ:

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
- ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 1-3 ສະຫາຍ.

**6.2. ຮອບທີ 2:**

❖ ວາລະທີ 01: ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ຜູ້ແທນສົມບູນ ແລະ ສຳຮອງ ທີ່ໄດ້ຮັບການເລືອກຕັ້ງຈາກບັນດາຮາກຖານພັກ;
  + ຄະນະປະຈຳ, ປະທານຄະນະກຳມາທິການ ແລະ ເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ;
  + ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
  + ຄະນະບໍລິຫານງານພັກເມືອງ-ນະຄອນ;
  + ຄະນະພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ນະຄອນຫຼວງ;
  + ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;
- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 02 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 03 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນບໍ່ກຳນົດຈຳນວນທີ່ຈະຂີດອອກ, ໃນກໍລະນີ ຂີດອອກໝົດ ຫຼື ບໍ່ຂີດ ຖືວ່າ

ບັດໃຊ້ການບໍ່ໄດ້;

❖ **ວາລະທີ 02:** ແມ່ນການຫາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
  + ຄະນະປະຈຳ, ປະທານຄະນະກຳມາທິການ ແລະ ເລຂາທິການສະພາປະຊາຊົນ ແຂວງ-ນະຄອນຫຼວງວຽງຈັນ;
  + ຄະນະບໍລິຫານງານພັກກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ;
  + ຄະນະປະຈຳພັກເມືອງ-ນະຄອນ;
  + ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
  + ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຮອງຫົວໜ້າພະແນກການອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ທຽບເທົ່າ ຂຶ້ນໄປ.
- **ເປົ້າໝາຍອອກຫາບທາມ ປະກອບດ້ວຍ:**
  + ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ໃຫ້ຜູ້ເຂົ້າຮ່ວມຫາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕຳແໜ່ງງານ ແຕ່ 1-3 ສະຫາຍ.

**6.3. ຮອບທີ 3:**

ການຫາບທາມຮອບທີ 3 (ຮອບສຸດທ້າຍ) ໃຫ້ດຳເນີນພາຍຫຼັງສຳເລັດການດຳເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ;

❖ **ວາລະທີ 01:** ແມ່ນການຫາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສະຫຼຸບການນຳພາລວມ ຂອງຄະນະບໍລິຫານງານພັກຄັ້ງສຸດທ້າຍ;

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;
- **ເປົ້າໝາຍອອກຫາບທາມ ໃຫ້ປະຕິບັດດັ່ງນີ້:**

  ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການຫາບທາມ ຮອບທີ 2 ໃນວາລະທີ 01, ເພື່ອເອົາອອກຫາບທາມ ຮອບທີ 3 ໃນວາລະທີ 01;
- **ການຂີດບັດຫາບທາມ:** ແມ່ນກຳນົດຈຳນວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການຫາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ຜູ້ແທນສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ ທີ່ບໍ່ແມ່ນຄະນະບໍລິຫານງານພັກ;
- **ເປົ້າໝາຍອອກຫາບທາມ ໃຫ້ປະຕິບັດດັ່ງນີ້:**

  ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນ

ຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 2 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 03 ວາລະທີ 02;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ ໃນແຕ່ລະຕໍາແໜ່ງ.

**7. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກເມືອງ-ນະຄອນ ແລະ ທຽບເທົ່າ.**

7.1. ຮອບທີ 1:

❖ ເປົ້າໝາຍເຂົ້າຮ່ວມທາບທາມຄະນະບໍລິຫານງານພັກ ປະກອບດ້ວຍ :

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານອ້ອມຂ້າງເມືອງ-ນະຄອນ ແລະ ທຽບເທົ່າ;
- ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກບ້ານ;
- ຄະນະພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ ແລະ ທຽບເທົ່າ;
- ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈໍາເມືອງ-ນະຄອນ ແລະ ທຽບເທົ່າ ຂຶ້ນໄປ;
- ນາຍທະຫານ, ນາຍຕໍາຫຼວດ ທີ່ເປັນສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ທີ່ຂຶ້ນກັບສອງກອງບັນຊາການຂັ້ນເມືອງ ແລະ ທຽບເທົ່າ ຂຶ້ນໄປ;
- ພະນັກງານບໍານານ ອາດີດຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ທີ່ຍັງຮ່ວມຊີວິດພັກ ປູ່ອີງຄະນະພັກດັ່ງກ່າວ.

❖ ເປົ້າໝາຍອອກທາບທາມ ປະກອບດ້ວຍ:

- ຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ຊຸດເກົ່າ ທີ່ຍັງປະຈໍາການ;
- ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 1-3 ສະຫາຍ.

7.2. ຮອບທີ 2:

❖ ວາລະທີ 01: ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ;

-ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກເມືອງ-ນະຄອນ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
+ ຜູ້ແທນສົມບູນ ແລະ ສໍາຮອງ ທີ່ໄດ້ຮັບການເລືອກຕັ້ງຈາກຮາກຖານພັກ;
+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານອ້ອມຂ້າງເມືອງ-ນະຄອນ;
+ ຄະນະພັກກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ;
+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານບ້ານ;
+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການປະຈໍາເມືອງ ແລະ ທຽບເທົ່າ ຂຶ້ນໄປ;
+ ນາຍ, ພົນທະຫານ, ນາຍ, ພົນຕໍາຫຼວດ ທີ່ເປັນສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຫົວໜ້າພະແນກ ທີ່ຂຶ້ນກັບສອງກອງບັນຊາການຂັ້ນເມືອງ ແລະ ທຽບເທົ່າ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2

ໃນວາລະທີ 01;

- **ການຂີດບັດຫາບທາມ**: ແມ່ນບໍ່ກໍານົດຈໍານວນທີ່ຈະຂີດອອກ, ໃນກໍລະນີ ຂີດອອກໝົດ ຫຼື ບໍ່ຂີດ ຖືວ່າບັດໃຊ້ການບໍ່ໄດ້.

❖ **ວາລະທີ 02:** ແມ່ນການຫາບທາມຄະນະຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
  + ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
  + ຄະນະພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ;
  + ຄະນະພັກຮາກຖານບ້ານ ແລະ ຄະນະໜ່ວຍພັກບ້ານ.
  + ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈໍາເມືອງ-ນະຄອນ ຂຶ້ນໄປ.
- **ເປົ້າໝາຍອອກຫາບທາມ ປະກອບດ້ວຍ:**

  + ຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຊຸດເກົ່າທີ່ຍັງປະຈໍາການ;

  + ໃຫ້ຜູ້ເຂົ້າຮ່ວມຫາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕໍາແໜ່ງງານ ແຕ່ 1-3 ສະຫາຍ.

**7.3. ຮອບທີ 3:**

ການຫາບທາມຮອບທີ 3 (ຮອບສຸດທ້າຍ) ໃຫ້ດໍາເນີນພາຍຫຼັງສໍາເລັດການດໍາເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ.

❖ **ວາລະທີ 01:** ແມ່ນການຫາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກຄັ້ງສຸດທ້າຍ;

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**
  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
  + ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;
- **ເປົ້າໝາຍອອກຫາບທາມ ໃຫ້ປະຕິບັດດັ່ງນີ້:**

  ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການຫາບທາມ ຮອບທີ 02 ໃນວາລະທີ 01, ເພື່ອເອົາອອກຫາບທາມ ຮອບທີ 3 ໃນວາລະທີ 01;
- **ການຂີດບັດຫາບທາມ**: ແມ່ນກໍານົດຈໍານວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການຫາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ .

- **ເປົ້າໝາຍເຂົ້າຮ່ວມຫາບທາມ ປະກອບດ້ວຍ:**

  + ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

  + ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈໍາເມືອງ ຂຶ້ນໄປທີ່ບໍ່ແມ່ນຄະນະບໍລິຫານງານພັກ;
- **ເປົ້າໝາຍອອກຫາບທາມ ໃຫ້ປະຕິບັດດັ່ງນີ້:**

  ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນ

ຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະ 02;

- ການຂີດປັດທາບທາມ: ແມ່ນກຳນົດຈຳນວນທີ່ຈະຂີດອອກ ໃນແຕ່ລະຕຳແໜ່ງ.

**8. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈຳພັກ (ຖ້າມີ), ເລຂາ, ຮອງເລຂາຄະນະພັກ, ປະທານ, ຮອງປະທານຄະນະກວດກາພັກ ຂັ້ນຮາກຖານພັກ ໃຫ້ດຳເນີນ 02 ຮອບດັ່ງນີ້:**

**8.1. ຮອບທີ 1:**

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາ ແລະ ຮ່າງປຶດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍ:
  + ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງປະຈຳການ;
  + ສະມາຊິກພັກສົມບູນທັງໝົດ;
- ເປົ້າໝາຍອອກທາບທາມ :
  + ຄະນະພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 01-03 ສະຫາຍ;

❖ ວາລະທີ 02: ແມ່ນການທາບທາມຄະນະປະຈຳພັກ; ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ:

  + ຄະນະພັກຮາກຖານ ປະກອບດ້ວຍ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງປະຈຳການ ແລະ ຄະນະໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ;

  + ໜ່ວຍພັກ ປະກອບດ້ວຍ: ຄະນະໜ່ວຍພັກ ຊຸດເກົ່າ ທີ່ຍັງປະຈຳການ ແລະ ສະມາຊິກພັກສົມບູນທັງໝົດ;

- ເປົ້າໝາຍອອກທາບທາມ:

  + ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈຳການ;

  + ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕຳແໜ່ງ ແຕ່ 1-3 ສະຫາຍ.

8.2. ຮອບທີ 2:

ການຈັດຕັ້ງການທາບທາມ ຮອບທີ 2 (ຮອບສຸດທ້າຍ) ໃຫ້ດຳເນີນພາຍຫຼັງສຳເລັດການດຳເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກ.

❖ ວາລະທີ 01: ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາ ແລະ ຮ່າງປຶດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ ຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:
  + ຄະນະພັກຮາກຖານ, ຄະນະໜ່ວຍພັກ ຊຸດເກົ່າ ທີ່ຍັງປະຈຳການ;
  + ສະມາຊິກພັກສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;
- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນ ຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2;

- ການຂີດປັດທາບທາມ: ແມ່ນກຳນົດຈຳນວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- **ເປົ້າໝາຍເຂົ້າຮ່ວມທາບທາມ:**

  **+ ຄະນະພັກຮາກຖານ ປະກອບດ້ວຍ:** ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງປະຈຳການ; ເລຂາ ແລະ ຮອງເລຂາໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ;

  **+ ໜ່ວຍພັກ ປະກອບດ້ວຍ:** ຄະນະໜ່ວຍພັກ ຊຸດເກົ່າ ທີ່ຍັງປະຈຳການ ແລະ ສະມາຊິກພັກສົມບູນທັງໝົດ;

- **ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:**

  ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 02 ໃນວາລະ 02;

- **ການຂີດບັດທາບທາມ:** ແມ່ນກຳນົດຈຳນວນທີ່ຈະຂີດອອກ ໃນແຕ່ລະຕຳແໜ່ງ.

**9. ການດຳເນີນຊີວິດການເມືອງຂອງຄະນະບໍລິຫານງານພັກ ທ້າຍສະໄໝ**

- ການດຳເນີນຊີວິດການເມືອງ ແມ່ນໃຫ້ປະຕິບັດຕາມບາດກ້າວ, ຂັ້ນຕອນ, ເນື້ອໃນ ທີ່ໄດ້ກຳນົດໄວ້ ຢູ່ໃນຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ຄຳແນະນຳຂອງຄະນະກວດກາສູນກາງພັກ;

- ພາຍຫຼັງສຳເລັດຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ໃນກໍລະນີມີບັນຫາທີ່ພົວພັນເຖິງເປົ້າໝາຍ ຈະລົງທາບທາມ ໃຫ້ຄະນະຮັບຜິດຊອບ ສະຫຼຸບຜົນການດຳເນີນຊີວິດການເມືອງ ເພື່ອລາຍງານຕໍ່ກອງປະຊຸມທາບທາມບຸກຄະລາກອນຊາຍ ກ່ອນຈະດຳເນີນການທາບທາມ ຮອບສຸດທ້າຍ; ຄະນະຮັບຜິດຊອບ ຈະຕ້ອງໄດ້ອະທິບາຍ, ຊີ້ແຈງຕໍ່ກອງປະຊຸມຊາຍ, ເມື່ອຈຳເປັນ ກໍໃຫ້ເປົ້າໝາຍບຸກຄະລາກອນ ທີ່ກ່ຽວຂ້ອງ ອະທິບາຍ, ຊີ້ແຈງ; ການສະຫຼຸບຜົນການດຳເນີນຊີວິດການເມືອງ ໃຫ້ຕີລາຄາບັນຍາກາດ, ຜົນໄດ້ຮັບ, ຄວາມຮັບຜິດຊອບ ຂອງຄະນະພັກ ໃນການສຳຫຼວດກວດກາກັນຢູ່ພາຍໃນ ໂດຍສະເພາະແມ່ນຄວາມຮັບຜິດຊອບ ຕໍ່ຄຳເຫັນ, ຄຳຕິຊົມຂອງສະມາຊິກພັກ ທີ່ຈະຕ້ອງໄດ້ຊີ້ແຈງຕໍ່ການນຳພາລວມຂອງຄະນະພັກ ແລະ ບຸກຄົນຄະນະພັກ.

**10. ກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ**

- ໄລຍະເວລາດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ ໃຫ້ຈັດຂຶ້ນຫຍັບມໍ່ກັບ ມື້ດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກ ຂັ້ນຄົນ ບໍ່ໃຫ້ກາຍ 10 ວັນ ລັດຖະການ;

- ພາຍຫຼັງຄະນະບໍລິຫານງານພັກ ໄດ້ລາຍງານຄວາມພ້ອມ ໃຫ້ຄະນະພັກຂັ້ນເທິງ ສຳເລັດ, ຄະນະບໍລິຫານງານພັກ ຕ້ອງດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ອີກເທື່ອໜຶ່ງ ເພື່ອແຈ້ງຜົນການຄົ້ນຄວ້າ ຂອງຄະນະພັກ ຂັ້ນເທິງ ກ່ຽວກັບເນື້ອໃນ ແລະ ບຸກຄະລາກອນອັນລະອຽດ, ເຊິ່ງລວມເຖິງບຸກຄົນຄະນະບໍລິຫານງານພັກ ຊຸດເກົ່າ ຈຳນວນໜຶ່ງ ທີ່ຄະນະພັກຂັ້ນເທິງ ບໍ່ໃຫ້ສືບຕໍ່ສະໝັກເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່.

**11. ການກະກຽມຜູ້ແທນສົມບູນ ແລະ ສຳຮອງ**

- ຄະນະປະຈຳພັກ ເປັນຜູ້ແບ່ງປັນຈຳນວນຜູ້ແທນສົມບູນ ແລະ ສຳຮອງ ໃຫ້ບັນດາການຈັດຕັ້ງພັກ ທີ່ຂຶ້ນກັບຕົນຕາມຄວາມເໝາະສົມ, ແຕ່ຕ້ອງຮັບປະກັນໃຫ້ທຸກການຈັດຕັ້ງພັກ ທີ່ຂຶ້ນກັບອົງຄະນະພັກຕົນ ມີຕົວແທນເຂົ້າຮ່ວມ;

- ການກຳນົດຈຳນວນຜູ້ແທນສົມບູນ ແມ່ນບໍ່ໃຫ້ເກີນ 10 % ຂອງຄັ້ງຜ່ານມາ, ແຕ່ຈຳນວນລວມຂອງຜູ້ແທນສົມບູນ ແມ່ນໃຫ້ເປັນຈຳນວນຄີກ.

**ຕົວຢ່າງ**: ກອງປະຊຸມໃຫຍ່ຜູ້ແທນ ຄັ້ງຜ່ານມາມີຜູ້ແທນສົມບູນ ເຂົ້າຮ່ວມທັງໝົດ 121 ສະຫາຍ, ກອງປະຊຸມໃຫຍ່ຜູ້ແທນຄັ້ງນີ້ ຈະມີຜູ້ແທນເພີ່ມຂຶ້ນບໍ່ເກີນ 12 ສະຫາຍ, ໝາຍຄວາມວ່າຜູ້ແທນສົມບູນຄັ້ງນີ້ ຈະມີຜູ້ແທນສົມບູນເຂົ້າຮ່ວມ ບໍ່ໃຫ້ກາຍ 133 ສະຫາຍ;

- ການເລືອກຕັ້ງຜູ້ແທນສົມບູນ ແລະ ສຳຮອງ ໃຫ້ດຳເນີນເທື່ອດຽວ, ຜູ້ທີ່ໄດ້ຮັບການເລືອກຕັ້ງເປັນຜູ້ແທນສົມບູນ ໃຫ້ເອົາຕາມລຳດັບ 1 ຈົນຮອດລຳດັບສຸດທ້າຍ ຂອງຈຳນວນຜູ້ແທນສົມບູນ, ຖັດໄປແມ່ນເປັນຜູ້ແທນສຳຮອງ ຄົບຕາມຈຳນວນ ທີ່ກຳນົດໄວ້; ໃນກໍລະນີຜູ້ຖັດໄປ ຄະແນນບໍ່ຮອດ 50 ເປີເຊັນ ຂຶ້ນໄປ ແມ່ນໃຫ້ດຳເນີນການປ່ອນບັດເລືອກຕັ້ງຄືນໃໝ່;

**ຕົວຢ່າງ**: ອົງຄະນະພັກ (ກ) ຕ້ອງການຈຳນວນຜູ້ແທນສົມບູນ 15 ສະຫາຍ ແລະ ສຳຮອງ 03 ສະຫາຍ, ຜູ້ອອກສະໝັກຮັບເລືອກຕັ້ງຢ່າງໜ້ອຍ ຕ້ອງມີ 21 ສະຫາຍ; ໝາຍວ່າແຕ່ລຳດັບທີ 1-15 ແມ່ນຜູ້ແທນສົມບູນ, ລຳດັບທີ 16-18 ແມ່ນຜູ້ແທນສຳຮອງ.

ໃນກໍລະນີຜູ້ແທນສົມບູນ ແລະ ສຳຮອງ ມີຄະແນນເທົ່າກັນ ແມ່ນບໍ່ໃຫ້ດຳເນີນການປ່ອນບັດຄືນໃໝ່ ມອບໃຫ້ຄະນະປະທານກອງປະຊຸມໃຫຍ່ ເປັນຜູ້ພິຈາລະນາຕົກລົງ ໂດຍໃຫ້ຖືເອົາຜູ້ທີ່ມີອາຍຸພັກ ແລະ ຕຳແໜ່ງພາຍໃນພັກ ທີ່ສູງກວ່າເປັນເງື່ອນໄຂຕັດສິນ.

**12. ໄລຍະເວລາດຳເນີນກອງປະຊຸມໃຫຍ່.**

ຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງດຳເນີນກອງປະຊຸມໃຫຍ່ ຂັ້ນຕົນ ສຳເລັດກ່ອນກອງປະຊຸມໃຫຍ່ຄະນະພັກຂັ້ນເທິງ ຖັດຕົນ ບໍ່ໃຫ້ເກີນ 06 ເດືອນ;

**ຕົວຢ່າງ**: ບັນດາອົງຄະນະພັກເມືອງ-ນະຄອນ ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍເດືອນ ມີນາ(3) 2025, ກອງປະຊຸມໃຫຍ່ອົງຄະນະພັກແຂວງ-ນະຄອນຫຼວງ ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍເດືອນ ກັນຍາ 2025.

**13. ການກະກຽມລາຍງານຄວາມພ້ອມ ກ່ຽວກັບການກະກຽມດຳເນີນກອງປະຊຸມໃຫຍ່ ຕໍ່ຄະນະພັກຂັ້ນເທິງ.**

ຄະນະພັກ ແຕ່ລະຂັ້ນ ຕ້ອງໄດ້ກະກຽມເນື້ອໃນເອກະສານຕ່າງໆດັ່ງນີ້:

- ບົດລາຍງານຄວາມພ້ອມ ໃນການກະກຽມດຳເນີນກອງປະຊຸມໃຫຍ່ ຂັ້ນຕົນ (ໂດຍຫຍໍ້);
- ເອກະສານດ້ານເນື້ອໃນປະກອບດ້ວຍ: ຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ແຜນພັດທະນາຂອງຂະແໜງການ ແລະ ຮ່າງບົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ, ວາລະ ແລະ ຄາດຄະເນເວລາດຳເນີນກອງປະຊຸມໃຫຍ່;
- ຊີວະປະຫວັດຫຍໍ້ການເຄື່ອນໄຫວ ແລະ ຄະແນນການທາບທາມແຕ່ລະຮອບ ຂອງບັນດາເປົ້າໝາຍທີ່ຈະອອກສະໝັກຮັບເລືອກຕັ້ງ ແລະ ກະກຽມເປົ້າໝາຍສຳຮອງ ໄວ້ຈຳນວນໜຶ່ງ;
- ແຜນຄາດຄະເນການສັບຊ້ອນຈັດວາງຄະນະບໍລິຫານງານພັກ ຊຸດໃໝ່; ແຜນຄາດຄະເນ ຜູ້ຈະເປັນຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ.

## III. ວິທີຈັດຕັ້ງປະຕິບັດ

1. ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຕ່ລະຂັ້ນ ເອື້ອມເຊີນ, ກຳແໜ້ນເນື້ອໃນຄຳແນະນຳສະບັບນີ້ ໃຫ້ເລິກເຊິ່ງ ແລະ ຜັນຂະຫຍາຍເປັນອັນລະອຽດ, ເປັນເຈົ້າການເຜີຍແຜ່ໃຫ້ອົງການເສນາທິການ ແລະ ຄະນະພັກຂັ້ນລຸ່ມ ທີ່ຂຶ້ນກັບຕົນ ເພື່ອຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງ;

2. ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຕ່ລະຂັ້ນ ຄົ້ນຄວ້າແຕ່ງຕັ້ງຄະນະຮັບຜິດຊອບ, ອະນຸກຳມະການຕ່າງໆໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່, ພ້ອມທັງສ້າງແຜນການເຄື່ອນໄຫວລະອຽດ

ຂອງແຕ່ລະອະນຸກຳມະການ;

3. ຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງປະສານສົມທົບກັບອົງການເສນາທິການ ທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ໃຫ້ມີຄວາມຖືກຕ້ອງ ແລະ ມີປະສິດທິຜົນ;

4. ຜ່ານການຈັດຕັ້ງປະຕິບັດ ຖ້າພົບບັນຫາໃດ ບໍ່ຈະແຈ້ງ ຫຼື ມີຄວາມຫຍຸ້ງຍາກ ໃຫ້ລາຍງານຕໍ່ຄະນະເລຂາທິການສູນກາງພັກ (ໂດຍຜ່ານຄະນະຈັດຕັ້ງສູນກາງພັກ) ພິຈາລະນາ ແລະ ໃຫ້ທິດຊີ້ນຳທັນເວລາ;

5. ພາຍຫຼັງສຳເລັດກອງປະຊຸມໃຫຍ່ຂອງແຕ່ລະອົງຄະນະພັກແລ້ວ, ຄະນະພັກ ແຕ່ລະຂັ້ນ ຕ້ອງຮີບຮ້ອນຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມໃຫຍ່ ໃຫ້ເລິກເຊິ່ງ, ທົ່ວເຖິງ; ຫັນເປັນແຜນດຳເນີນງານ, ແຜນການເຄື່ອນໄຫວລະອຽດໃນແຕ່ລະໄລຍະ,ພ້ອມທັງແບ່ງງານ, ແບ່ງຄວາມຮັບຜິດຊອບ ໃຫ້ບັນດາສະຫາຍກຳມະການຄະນະພັກ ໃຫ້ລະອຽດ ແລະ ຈະແຈ້ງ;

6. ຄຳແນະນຳສະບັບນີ້ ປ່ຽນແທນຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 784/ຄຈສພ, ລົງວັນທີ 14 ກັນຍາ 2018 ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 04/ຄລສພ, ລົງວັນທີ 07 ພຶດສະພາ 2018 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າຄະນະຈັດຕັ້ງສູນກາງພັກ

ບ.ສີໃສ ລືເດດມູນສອນ